ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ — ນະຄອນຫຼວງວຽງຈັນ, ວັນທີ: 22/11/2022

# ບົດບັນທຶກ

## ກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2022.

## ວັນທີ 22/11/2022

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມຜູ້ຖືຮຸ້ນ ທຄຕລ ສະໄໝວິສາມັນ ປະຈຳປີ 2022 (ຕໍ່ໄປນີ້ຮຽກວ່າ: "ກອງປະຊຸມ") ຂຶ້ນໃນເວລາ 14:35 ໂມງ ຂອງວັນທີ 22 ພະຈິກ 2022 ທີ່ ສຳນັກງານໃຫຍ່ ທຄຕລ ນະຄອນຫຼວງວຽງຈັນ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ, ຮອງປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍສະມາຊິກສະພາບໍລິຫານ ທຄຕລ, ມີຜູ້ຖືຮຸ້ນເຂົ້າຮ່ວມດ້ວຍຕົນເອງຈຳນວນ 16 ທ່ານ, ຜູ້ມອບສິດຈຳນວນ 145 ທ່ານ ຊຶ່ງລວມຈຳນວນຮຸ້ນທັງໝົດທີ່ເຂົ້າຮ່ວມກອງປະຊຸມເທົ່າກັບ 152.435.111 ຮຸ້ນ, ນັບທັງ 929.531 ຮຸ້ນ ທີ່ຖືກມອບສິດ, ບັນລຸອັດຕາສ່ວນ 73,384% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ ແລະ ຖືວ່າຄົບອົງປະຊຸມ ເພື່ອໃຫ້ສາມາດດຳເນີນກອງປະຊຸມໄດ້ຕາມກົດລະບຽບຂອງ ທຄຕລ ແລະ ກົດໝາຍທີ່ກ່ຽວຂ້ອງ. ສຳລັບຮຸ້ນທີ່ບໍ່ໄດ້ເຂົ້າຮ່ວມກອງປະຊຸມ ມີຈຳນວນ 55.288.189 ຮຸ້ນ ເທົ່າກັບ 26,616% ຂອງຈຳນວນຮຸ້ນ ທຄຕລ ທັງໝົດ.

ຄະນະປະທານ ແລະ ສະມາຊິກສະພາບໍລິຫານທີ່ເຂົ້າຮ່ວມກອງປະຊຸມ ປະກອບມີ:

1. ທ່ານ ຄຳສຸກ ສູນດາລາ, ສະມາຊິກສະພາບໍລິຫານອິດສະຫຼະ, ຮອງປະທານສະພາບໍລິຫານ ເຮັດໜ້າທີ່ເປັນປະທານກອງປະຊຸມ;
2. ທ່ານ ປະສົມເພັດ ຄຳຕັນ, ຕາງໜ້າກະຊວງການເງິນ, ສະມາຊິກສະພາບໍລິຫານ;
3. ທ່ານ ວຽງສຸກ ຈຸນທະວົງ, ຮອງຜູ້ອຳນວຍການ, ສະມາຊິກສະພາບໍລິຫານ;
4. ທ່ານ ຮສຈ. ທອງເພັດ ຈັນທະນີວົງ, ສະມາຊິກສະພາບໍລິຫານອິດສະຫຼະ;
5. ທ່ານ ສອນໄຊ ສີລາເພັດ, ສະມາຊິກສະພາບໍລິຫານອິດສະຫຼະ;
6. ທ່ານນາງ ລັດດາວັນ ຊົງວິໄລ, ສະມາຊິກສະພາບໍລິຫານອິດສະຫຼະ.
7. ທ່ານ ສະເຕຟານ ອຽກແບັງ, ຕາງໜ້າ COFIBRED ຄູ່ຮ່ວມຍຸດທະສາດ;
8. ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ.

ປະທານກອງປະຊຸມ ໄດ້ແນະນຳລະບຽບການດຳເນີນກອງປະຊຸມ ແລະ ວິທີລົງຄະແນນສຽງ. ຈາກນັ້ນ ກອງປະຊຸມ ຈຶ່ງໄດ້ດຳເນີນແຕ່ລະວາລະຕາມລຳດັບ.

ກອງປະຊຸມ ໄດ້ພິຈາລະນາ, ມີຄຳເຫັນ ແລະ ມີການຕົກລົງໃນແຕ່ລະວາລະ ດັ່ງນີ້:

**ວາລະທີ 1: ຮັບຮອງບົດບັນທຶກກອງປະຊຸມຜູ້ຖືຮຸ້ນປະຈຳປີ 2021**

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມວ່າບົດບັນທຶກກອງປະຊຸມຜູ້ຖືຮຸ້ນຂອງ ທຄຕລ ປະຈຳປີ 2021 ທີ່ຈັດຂຶ້ນໃນວັນທີ 29 ເມສາ 2022 ເຊິ່ງບົດບັນທຶກດັ່ງກ່າວ ໄດ້ຖືກເປີດເຜີຍຢ່າງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງແລ້ວ, ສະເໜີກອງປະຊຸມ ພິຈາລະນາຮັບຮອງເອົາບົດບັນທຶກດັ່ງກ່າວ.

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນມີຄຳຖາມ, ແຕ່ບໍ່ມີຄຳຖາມຈາກຜູ້ຖືຮຸ້ນ;

ກອງປະຊຸມ ໄດ້ມີມະຕິຮັບຮອງດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: **152.435.111** ສຽງ, ເທົ່າກັບ **100 %** ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2: ລາຍງານການດຳເນີນງານຂອງ ທຄຕລ ໄລຍະ 9 ເດືອນ ປີ 2022:**

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ໄດ້ລາຍງານໃຫ້ກອງປະຊຸມຮັບຊາບ ກ່ຽວກັບການປະຕິບັດມະຕິກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານ, ການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຄຕລ ແລະ ຜົນການດຳເນີນທຸລະກິດໄລຍະ **9 ເດືອນ ປີ 2022 (ຕົວເລກກ່ອນການກວດສອບ) ເຊິ່ງມີຕົວເລກສຳຄັນດັ່ງນີ້:**

- **ຍອດຊັບສິນ:** 86.652.772 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ລື່ນແຜນການ 19,47% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ **37,34%**;
- **ຍອດເງິນກູ້ທັງໝົດ:** 40.673.338 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ລື່ນແຜນການ 28,16% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 36,97%;
- **ອັດຕາສ່ວນ NPL:** 3,24%
- **ຍອດເງິນຝາກ:** 79.479.447 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ລື່ນແຜນການ 20,42% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ **39,22%**;
- **ທຶນທັງໝົດ:** 2.139.294 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ **86,61%** ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຫຼຸດລົງ 0,16%;
- **ກຳໄລ/ຂາດທຶນ ກ່ອນອາກອນ:** 25.581 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 43,36%;
- **ກຳໄລ/ຂາດທຶນ ຫຼັງອາກອນ:** 24.740 ລ້ານກີບ, ທຽບໃສ່ແຜນການປີ 2022 ປະຕິບັດໄດ້ 52,42%.

ຈາກນັ້ນ ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ໄກວັນ ກາດາວານິດ (Mr. Kraiwal Kadavanich)** ຕາງໜ້າສະມາຄົມຜູ້ຖືຮຸ້ນໄທ ມີຄຳເຫັນດັ່ງນີ້:

- ຕາມເອກະສານຊ້ອນທ້າຍ 3 ຂໍ້ 4 ທີ່ລະບຸວ່າການການສະໜອງວັດຖຸເຕັກນິກ, ກໍ່ສ້າງສ້ອມແປງ ປະຕິບັດໄດ້ 9% ຂອງແຜນການປີ ແຕ່ບໍ່ເວົ້າລະອຽດວ່າເພີ່ມ ຫລື ຫລຸດລົງ.
- ການຍ້າຍ 2 ໜ່ວຍບໍລິການ ທີ່ ທ່ານຜູ້ອຳນວຍການລາຍງານ, ແຕ່ໃນເອກະສານຊ້ອນທ້າຍ 3 ຂໍ້ 5 ໄດ້ກຳນົດວ່າເປີດໃໝ່ອີກ 2 ສາຂາ, ສະເໜີໃຫ້ຊີ້ແຈງວ່າເປັນການຍ້າຍ ຫຼື ເປີດໃໝ່.
- ການລວມພະແນກການຕະຫລາດເຂົ້າພະແນກບໍລິການລູກຄ້າລາຍໃຫຍ່ນັ້ນ ວຽກກົນລະຍຸດການຕະຫຼາດ ແລະ ການຂາຍ (sales and marketing strategy) ສຳລັບບໍລິການ Retail banking ພາກສ່ວນໃດຮັບຜິດຊອບ.
- ຕາມເອກະສານຄັດຕິດ ທີ່ບອກວ່າຈະມີຫນ່ວຍບໍລິການສະຖານີລົດໄຟ, ແຕ່ໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ ທຄຕລ ຄັ້ງຜ່ານມາແມ່ນລະບຸວ່າຈະ ບໍ່ມີແຜນຂະຫຍາຍຫນ່ວຍບໍລິການເພີ່ມ, ຈຶ່ງຂໍຄວາມຊັດເຈນດ້ວຍ.
- ຕາມການລາຍງານວ່າຮັບພະນັກງານ 6 ຄົນ, ແຕ່ໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາ ແມ່ນບໍ່ລະບຸການຮັບພະນັກງານ.
- ຂໍຄວາມຊັດເຈນວ່າໃນວາລະ 2 ຈະມີການລົງຄະແນນສຽງຫຼືບໍ່ ເນື່ອງມີບັດລົງຄະແນນ, ແຕ່ອີງຕາມການແຈ້ງຂອງປະທານກອງປະຊຸມ ເຫັນວ່າເປັນພຽງວາລະລາຍງານເພື່ອຊາບເທົ່ານັ້ນ;
- ສຳລັບການຮັບພະນັກງານໃໝ່ 6 ຄົນຂອງ ທຄຕລ, ກໍລະນີກອງປະຊຸມຜູ້ຖືຮຸ້ນ ຫາກບໍ່ໄດ້ຮັບຮອງມາກ່ອນ ກໍ່ຄວນຈະໃຫ້ຜູ້ຖືຮຸ້ນລົງຄະແນນສຽງໃນວາລະ 2 ເພື່ອຮັບຮອງໃຫ້ ທຄຕລ ຮັບພະນັກງານເພີ່ມ 6 ຄົນດັ່ງກ່າວ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ** ສະແດງຄວາມຂອບໃຈຕໍ່ການປະກອບຄຳເຫັນ ແລະ ຊີ້ແຈງ:

- ການສະໜອງວັດຖຸເຕັກນິກ, ກໍ່ສ້າງສ້ອມແປງປະຕິບັດໄດ້ 9% ທຽບໃສ່ແຜນປີ, ເຊິ່ງລາຍການທີ່ກວມເອົາສ່ວນໃຫຍ່ຂອງແຜນການປີ ແມ່ນລາຍຈ່າຍການສ້າງສູນ DATA Center, ກ່ອນປະຕິບັດແຜນການກໍ່ສ້າງແມ່ນໄດ້ຮັບການເຫັນດີຈາກສະພາບໍລິຫານ ແລະ ກອງປະຊຸມຜູ້ຖືຮຸ້ນແລ້ວ. ການກໍ່ສ້າງໄດ້ດຳເນີນການສຳເລັດໄປແລ້ວບາງສ່ວນ, ເຊິ່ງເປັນລາຍການບັນທຶກບັນຊີຊັບສິນບັດຄົງທີ່ພວມຊື້ພວມກໍ່ສ້າງ. ໂຄງການກໍ່ສ້າງແມ່ນຍັງສືບຕໍ່ດຳເນີນການຢູ່. ສຳລັບ 9% ແມ່ນການປະກອບວັດຖຸເຕັກນິກ, ກໍ່ສ້າງສ້ອມແປງ ທີ່ໄດ້ຈົດເປັນຊັບສິນບັດທຽບໃສ່ແຜນການປີທີ່ກຳນົດໄວ້.
- 2 ໜ່ວຍບໍລິການທີ່ເປີດໃໝ່ ເປັນການຍ້າຍທີ່ຕັ້ງຂອງສອງໜ່ວຍເດີມ. ການຍ້າຍຫນ່ວຍບໍລິການໂພນຕ້ອງ ແລະ ໜ່ວຍບໍລິການນ້ຳພຸ ເນື່ອງຈາກມີຈຸດບໍລິການທີ່ຢູ່ໄກ້ກັນແລ້ວ ຈຶ່ງໄດ້ຍ້າຍໄປຕັ້ງບ່ອນທີ່ມີຊຸມຊົນຫຼາຍຂຶ້ນ ເພື່ອເພີ່ມປະສິດຕິພາບຂອງການບໍລິການລູກຄ້າ;.

- ການໂຮມພະແນກ: ເປັນການປະຕິບັດຕາມທິດທາງການປະຢັດ, ໂຄງຮ່າງການຈັດຕັ້ງໃຫຍ່ມີລາຍຈ່າຍສູງ ເຫັນວ່າມີຄວາມຈຳເປັນໂຮມ 4 ພະແນກເປັນ 2 ພະແນກ ແຕ່ພາລະບົດບາດທີ່ສຳຄັນຂອງບັນດາພະແນກ ລວມເຖິງການໃຫ້ບໍລິການປະເພດຕ່າງໆ ຍັງຮັກສາຄືເກົ່າ.
- ສຳຫຼັບໜ່ວຍບໍລິການທາງລົດໄຟ ແມ່ນຍັງເປັນການຄົ້ນຄວ້າວ່າຄວນມີໜ່ວຍບໍລິການຢູ່ສະຖານີລົດໄຟ, ແຕ່ ຍັງຊະລໍໄວ້ ເນື່ອງຈາກ ທຄຕລ ກໍຍັງມີການຄົ້ນຄວ້າຄວາມເປັນໄປໄດ້ໃນການຊຳລະຄ່າປີ້ລົດໄຟຮ່ວມກັບທາງ ລົດໄຟລາວຈີນ ແລະ ຄົ້ນຄວ້າບັນຫາຕ່າງໆຢູ່ ເຊິ່ງປະຈຸບັນແມ່ນຕິດຕັ້ງ ATM ເທົ່ານັ້ນ.
- ການຮັບພະນັກງານເພີ່ມຂອງ ທຄຕລ ແມ່ນການຮັບແບບຈຳກັດທີ່ສຸດ, ຮັບຕາມວຽກງານທີ່ຈຳເປັນ ເຊິ່ງປະຈຸບັນ ຜູ້ອຳນວຍການກຳລັງດຳເນີນການລົງຕິດຕາມບັນດາສາຂາທົ່ວລະບົບເພື່ອສັງລວມບັນຫາ ແລະ ຂໍ້ ມູນຕ່າງໆຈຶ່ງຈະສະຫຼຸບໃນການຮັບພະນັກງານຕົວຈິງເທົ່າໃດ ເພື່ອຂຶ້ນແຜນໃນປີ 2023; ສຳລັບການຮັບພະນັກ ງານ 6 ຄົນນັ້ນ ຂໍກວດເບິ່ງຂໍ້ມູນຄືນຕື່ມ ວ່າມີການບັນຈຸໄວ້ໃນແຜນປີ 2022 ທີ່ກອງປະຊຸມຄັ້ງຜ່ານມາຮັບ ຮອງເອົາແລ້ວຄືແນວໃດ, ແລ້ວຈຶ່ງນຳລາຍງານຕໍ່ກອງປະຊຸມຄັ້ງຕໍ່ໄປ.
- ສຳຫຼັບການກະກຽມເອກະສານຕ່າງໆໃນການຈັດກອງປະຊຸມຄັ້ງຕໍ່ໄປຈະເອົາໃຈໃສ່ກວດກາຄືນໃຫ້ລະອຽດຕື່ມ;
- ວາລະ 2 ບໍ່ມີການລົງຄະແນນສຽງ ຕາມທີ່ທ່ານປະທານກອງປະຊຸມໄດ້ແຈ້ງໄວ້ແລ້ວ.

❖ **ທ່ານ ໂສວັນນະລິດ ອິມ (Mr Sovanrith Im)** ຈາກທະນາຄານແຄນນາເດຍ: ປີ 2022 ຄາດວ່າ ທຄຕລ ຈະມີການຈ່າຍເງິນປັນຜົນຫລືບໍ່ ແລະ ແຜນການປີ 2023 ເປັນແນວໃດ?

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**: ຕໍ່ກັບຄວາມຄາດຫວັງໃນເງິນປັນຜົນປະຈຳປີ 2022, ຮອດເດືອນ 10/2022 ຜົນການດຳເນີນທຸລະກິດຂອງ ທຄຕລ ທີ່ບໍ່ທັນຜ່ານການກວດສອບ ແມ່ນມີກຳໄລ, ສຳຫຼັບທ້າຍປີ 2022 ຄະນະ ບໍລິຫານ ທຄຕລ ຈະສູ້ຊົນໃຫ້ຜົນການດຳເນີນງານ ທຄຕລ ມີກຳໄລສູງສຸດເທົ່າທີ່ຈະເປັນໄປໄດ້ ເພື່ອໃຫ້ສາມາດ ສະເໜີຈ່າຍ ເງິນປັນຜົນແກ່ຜູ້ຖືຮຸ້ນ ແຕ່ສຳລັບຈຳນວນເງິນປັນຜົນ ແລະ ຮູບການປັນຜົນ ແມ່ນຈະໄດ້ຄົ້ນຄວ້າ ນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປຕື່ມ.

- ແຜນການປະຈຳປີ 2023 ປະຈຸບັນທາງ ທຄຕລ ກຳລັງດຳເນີນການສ້າງແຜນ, ຈຸດສຳຄັນຂອງແຜນການແມ່ນ ທຄຕລ ເນັ້ນໜັກແຜນການແກ້ໄຂບັນຫາຕ່າງໆທີ່ເປັນຂໍ້ຫຍຸ້ງຍາກດ້ານຕ່າງໆໄລຍະຜ່ານມາ ເຊັ່ນ: ແກ້ໄຂບັນ ຫາ NPL ໃຫ້ຫລຸດລົງ, ຄວບຄຸມບໍ່ໃຫ້ເກີດມີ NPL ໃໝ່; ການປ່ອຍກູ້ຕ້ອງເຮັດດ້ວຍຄວາມລະມັດລະວັງ ແລະ ສຸມໃສ່ຂົງເຂດທີ່ເປັນບຸລິມະສິດຂອງລັດຖະບານ ແລະ ປ່ອຍກູ້ໃຫ້ສະເພາະຜູ້ກູ້ຢືມທີ່ມີເງື່ອນໄຂ, ພັດ ທະນາຜະລິດພັນຂອງ ທຄຕລ ໃຫ້ແທດເໝາະຕາມຄວາມຮຽກຮ້ອງຂອງສັງຄົມ ເພື່ອສ້າງລາຍຮັບຄ່າທຳນຽມ ໃຫ້ເພີ່ມຂຶ້ນ;

❖ **ທ່ານ ອັງ ບຸດ (Mr. Ang Buth)** ຈາກທະນາຄານແຄນນາເດຍ: ສອບຖາມກ່ຽວກັບແຜນການສ້າງຕັ້ງບໍລິສັດ ບໍລິຫານຊັບສິນຂອງ ທຄຕລ ໄດ້ດຳເນີນເຖິງໃສແລ້ວ, ທຄຕລ ຈະມີການຮ່ວມຮຸ້ນກັບພາກສ່ວນອື່ນແນວໃດ ຫຼື

ຖືຮຸ້ນເອງ 100%? ເພາະວ່າຈະເປັນແນວທາງຊັດເຈນ ສໍາລັບການບໍລິຫານຊັບສິນທີ່ຕິດພັນກັບ NPL ເພື່ອກໍ່ໃຫ້ເກີດມີລາຍຮັບກັບຄືນມາ ເຊິ່ງເປັນປະເດັນທີ່ຜູ້ຖືຮຸ້ນ ໃຫ້ຄວາມສົນໃຈ;

- ການເປີດ ແລະ ການປິດໜ່ວຍບໍລິການ ຫຼື ສາຂາ ອາດຈະກະທົບຕໍ່ລູກຄ້າໄດ້ ແລະ ຜົນດໍາເນີນງານໄດ້, ສະນັ້ນ ຄວນກໍານົດເປົ້າໝາຍດໍາເນີນງານທີ່ຊັດເຈນສໍາລັບໜ່ວຍບໍລິການ ແລະ ສາຂາ ເນື່ອງຈາກຜູ້ຖືຮຸ້ນ ກໍ່ຕ້ອງການເງິນປັນຜົນ;
- ສໍາລັບການລວມພະແນກ ແມ່ນເຫັນດີນໍາແລະສະແດງຄວາມຊົມເຊີຍ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**: ການສ້າງຕັ້ງບໍລິສັດບໍລິຫານຊັບສິນ ທຄຕລ ໄດ້ພະຍາຍາມຄົ້ນຄວ້າ ໂດຍມີບົດຮຽນຂອງຕ່າງປະເທດ ແລະ ສົມທົບກັບສູນເກັບຊື້ໜີ້ ທຫລ ເພື່ອເບິ່ງດ້ານຄວາມພ້ອມຕ່າງໆ, ຄຽງຄູ່ກັນນັ້ນໄດ້ຄົ້ນຄວ້າດ້ານຂໍ້ດີຂໍ້ເສຍໃນການສ້າງຕັ້ງບໍລິສັດດັ່ງກ່າວ ຈາກບົດຮຽນຂອງຫວຽດນາມ ແລະ ໄທ. ສໍາຫຼັບແຜນດ້ານການຮ່ວມຮຸ້ນໃນການສ້າງຕັ້ງບໍລິສັດໃນເບື້ອງຕົ້ນແມ່ນ ທຄຕລ ຈະຖືຮຸ້ນ 100% ກ່ອນ ຫຼັງຈາກນັ້ນຈຶ່ງຈະຄົ້ນຄວ້າການຮັບຂາຮຸ້ນອື່ນມາຮ່ວມບໍລິຫານ; ສໍາຫຼັບການສ້າງຕັ້ງແມ່ນລໍຖ້າການອະນຸມັດຈາກ ທຫລ, ຖ້າໄດ້ຮັບການເຫັນດີກໍ່ຈຶ່ງສາມາດສືບຕໍ່ໄດ້.

- ການສ້າງຕັ້ງ ແລະ ການປິດໜ່ວຍບໍລິການ ແມ່ນພິຈາລະນາບົນພື້ນຖານປະສິດຕິຜົນ. ສໍາລັບໜ່ວຍທີ່ໄດ້ປິດໄປແລ້ວ ພວກເຮົາຍັງຈະສືບຕໍ່ພິຈາລະນາເຖິງຜົນປະໂຫຍດທັງທາງກົງແລະທາງອ້ອມ, ຖ້າເປັນສິ່ງທີ່ດີຕໍ່ ທຄຕລ ກໍ່ຍັງຈະສະເໜີເປີດບໍລິການຄືນ. ບາງຈຸດທີ່ບໍ່ສາມາດຂະຫຍາຍໜ່ວຍບໍລິການກໍ່ຈະຄົ້ນຄວ້າການບໍລິການຢ່າງອື່ນແທນ ເຊັ່ນ: ການຕິດຕັ້ງ ATM ເພື່ອບໍລິການລູກຄ້າ.

☞ **ກອງປະຊຸມ ໄດ້ຮັບຊາບລາຍງານການດໍາເນີນງານຂອງ ທຄຕລ ໄລຍະ 9 ເດືອນ ປີ 2022.**

ໝາຍເຫດ: ວາລະນີ້ເປັນການລາຍງານເພື່ອຮັບຊາບເທົ່ານັ້ນ, ບໍ່ມີການລົງຄະແນນສຽງ.

**ວາລະທີ 3: ລາຍງານການແຕ່ງຕັ້ງຜູ້ອໍານວຍການ**

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອໍານວຍການ ທຄຕລ ໄດ້ລາຍງານຕໍ່ກອງປະຊຸມວ່າ: ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ ທີ່ຈັດຂຶ້ນໃນວັນທີ 1 ສິງຫາ 2022 ໄດ້ຮັບຮອງການຍົກຍ້າຍທ່ານ ຄໍາພູດ ສິດທິລາດ ອະດີດຜູ້ອໍານວຍການ ທຄຕລ ໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ ຕາມຄວາມຮຽກຮ້ອງຕ້ອງການດ້ານວຽກງານຈາກການຈັດຕັ້ງກ່ຽວຂ້ອງ ແລະ ໄດ້ຮັບຮອງການແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ເປັນຜູ້ອໍານວຍການ ທຄຕລ, ເຊິ່ງໄດ້ມີການຈັດພິທີມອບ-ຮັບໜ້າທີ່ລະຫວ່າງຜູ້ອໍານວຍການຜູ້ເກົ່າ ແລະ ຜູ້ໃໝ່ ໃນວັນທີ 2 ສິງຫາ 2022 ພ້ອມທັງໄດ້ເປີດເຜີຍຂໍ້ມູນໃຫ້ຜູ້ຖືຮຸ້ນ, ນັກລົງທຶນ ແລະ ມວນຊົນ ຮັບຊາບຢ່າງສອດຄ່ອງຕາມຂັ້ນຕອນການເປີດເຜີຍຂໍ້ມູນແລ້ວ. ການແຕ່ງຕັ້ງດັ່ງກ່າວສອດຄ່ອງກັບສິດໜ້າທີ່ຂອງສະພາບໍລິຫານຕາມທີ່ໄດ້ກໍານົດໄວ້ຢູ່ໃນກົດລະບຽບ ທຄຕລ, ກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ນິຕິກໍາທີ່ກ່ຽວຂ້ອງ. ອີງຕາມຂໍ້ 3 ຂອງມາດຕາ 123 ຂອງກົດໝາຍວ່າດ້ວຍວິສາຫະກິດ ໄດ້ກໍານົດວ່າ ຕໍາແໜ່ງຜູ້ອໍານວຍການທີ່ວ່າງລົງໃນລະຫວ່າງສອງກອງປະຊຸມສາມັນຂອງຜູ້ຖືຮຸ້ນ ແມ່ນແຕ່ງຕັ້ງໂດຍກອງປະຊຸມສະພາບໍລິຫານ.

ຈາກນັ້ນ ປະທານກອງປະຊຸມ ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງບໍ່ມີຄຳຖາມ ຫຼື ຄຳເຫັນໃດຈາກກອງປະຊຸມ;

☞ **ກອງປະຊຸມ ໄດ້ຮັບຊາບການລາຍງານການແຕ່ງຕັ້ງຜູ້ອຳນວຍການ ທຄຕລ.**

ໝາຍເຫດ: ວາລະນີ້ເປັນການລາຍງານເພື່ອຮັບຊາບເທົ່ານັ້ນ, ບໍ່ມີການລົງຄະແນນສຽງ.

**ວາລະ 4: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານປ່ຽນແທນຕຳແໜ່ງທີ່ວ່າງ**

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ລາຍງານຕໍ່ກອງປະຊຸມ: ສະພາບໍລິຫານ ທຄຕລ ຊຸດປະຈຸບັນ ຍັງຄົງເຫຼືອສະມາຊິກຈຳນວນ 7 ທ່ານ ຈາກ 9 ໃນເມື່ອກ່ອນ ເນື່ອງຈາກວ່າມີ 2 ທ່ານໄດ້ຮັບການສັບຊ້ອນໄປຮັບໜ້າທີ່ໃໝ່ຕາມການຕົກລົງຂອງຂັ້ນເທິງດັ່ງນີ້:

| | |
|---|---|
| 1. ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ | ປະທານ, ໄດ້ຮັບການແຕ່ງຕັ້ງເປັນຜູ້ວ່າການທະນາຄານແຫ່ງ ສປປ ລາວ ເຊິ່ງທ່ານໄດ້ມີໜັງສືແຈ້ງເຈດຈຳນົງມາຍັງສະພາບໍລິຫານ ທຄຕລ ເພື່ອຢຸດປະຕິບັດໜ້າທີ່ໃນສະພາບໍລິຫານ ທຄຕລ; |
| 2. ທ່ານ ຄຳພຸດ ສິດທິລາດ | ອະດີດຜູ້ອຳນວຍການ ທຄຕລ, ສະມາຊິກ, ໄດ້ຖືກສັບຊ້ອນໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ ເຊິ່ງອີງຕາມກົດລະບຽບຂອງ ທຄຕລ ຖືວ່າຄວາມເປັນສະມາຊິກສະພາບໍລິຫານ ກໍຕ້ອງສິ້ນສຸດລົງ. |

ຕໍ່ກັບ 2 ຕໍາແໜ່ງໃນສະພາບໍລິຫານ ທຄຕລ ທີ່ຫວ່າງນັ້ນ, ສະພາບໍລິຫານ ໄດ້ເຫັນດີເປັນເອກະພາບສະເໜີແຕ່ງຕັ້ງສະມາຊິກເພື່ອມາທົດແທນ ດັ່ງນີ້:

1. ສະເໜີແຕ່ງຕັ້ງ ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ແທນ ທ່ານ ຄຳພຸດ ສິດທິລາດ ເຊິ່ງກະຊວງການເງິນໄດ້ຕົກລົງ ກ່ຽວກັບ ການແຕ່ງຕັ້ງດັ່ງກ່າວແລ້ວ;
2. ສຳລັບການແຕ່ງຕັ້ງຜູ້ທີ່ຈະມາແທນທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ການຈັດຕັ້ງຂັ້ນເທິງພວມດຳເນີນການຄົ້ນຄວ້າຢູ່; ດ້ວຍເຫດນີ້ ຈຶ່ງສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນ ມອບອຳນາດໃຫ້ສະພາບໍລິຫານໃນການພິຈາລະນາຮັບຮອງການແຕ່ງຕັ້ງ ພາຍຫຼັງທີ່ໄດ້ຮັບຂໍ້ຕົກລົງແຕ່ງຕັ້ງຈາກຂັ້ນເທິງທີ່ກ່ຽວຂ້ອງ ແລ້ວທຳການເປີດເຜີຍຂໍ້ມູນຕາມລະບຽບການ ແລະ ນຳລາຍງານໃຫ້ຜູ້ຖືຮຸ້ນຮັບຊາບໃນກອງປະຊຸມຄັ້ງຕໍ່ໄປ.

ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນດັ່ງນີ້:

❖ **ທ່ານ ໄກວັນ ກາດາວານິດ**:

– ແຈ້ງໃຫ້ທີ່ປະຊຸມຊາບວ່າ ການຈັດລຽງລຳດັບຕົວເລກໃນຂໍ້ທີ່ບົ່ງບອກເຖິງຕຳແໜ່ງທີ່ວ່າງ ກັບການສະເໜີແຕ່ງຕັ້ງຜູ້ມາແທນ ຄວນຈະວາງລຳດັບໃຫ້ສອດຄ່ອງກັນ ແລະ ຕາມສະບັບພາສາອັງກິດ ເຫັນວ່າ ການແຕ່ງຕັ້ງ ທ່ານ

ນາງ ສາຍສະໝອນ ບອກວ່າລະບຸຢູ່ໃນເອກະສານຄັດຕິດ 5 ແຕ່ເມື່ອອ່ານເບິ່ງຕົວຈິງແລ້ວເອກະສານຄັດຕິດ 5 ແມ່ນເນື້ອໃນ ກ່ຽວກັບ ນະໂຍບາຍນ້ຳມັນ. ສະເໜີໃຫ້ເອົາໃຈໃສ່ໃນການກະກຽມເອກະສານຕື່ມ;

- ການສະເໜີໃຫ້ກອງປະຊຸມ ມອບສິດໃຫ້ສະພາບໍລິຫານຮັບຮອງເອົາຜູ້ທີ່ຈະມາເປັນປະທານສະພາບໍລິຫານ, ຄວນກຳນົດໃຫ້ຊັດເຈນວ່າກອງປະຊຸມໃຫ້ສິດ ສະພາບໍລິຫານຮັບຮອງເອົາບຸກຄົນຜູ້ທີ່ອີງການທີ່ກ່ຽວຂ້ອງກໍ່ຄື ກະຊວງການເງິນໄດ້ຕົກລົງແຕ່ງຕັ້ງເທົ່ານັ້ນ ເພື່ອບໍ່ໃຫ້ສະພາບໍລິຫານຮັບຮອງເອົາບຸກຄົນອື່ນ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**: ຕິດພັນກັບວາລະນີ້ ຈຸດສຸມແມ່ນສະເໜີຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ ທຄຕລ ແທນຕຳແໜ່ງທີ່ຫວ່າງ ຄື ຮັບຮອງຜູ້ອຳນວຍການເປັນສະມາຊິກສະພາບໍລິຫານໃຫ້ຖືກຕາມຂັ້ນຕອນທີ່ກຳນົດໃນລະບຽບ, ສຳຫຼັບຕຳແໜ່ງປະທານສະພາບໍລິຫານ ແທນ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ຜ່ານມາ ທຄຕລ ໄດ້ສະເໜີຫາຂັ້ນເທິງທີ່ກ່ຽວຂ້ອງແລ້ວ ເຊິ່ງຍັງຢູ່ໃນຂັ້ນຕອນການຄົ້ນຄວ້າ ແລະ ຜູ້ທີ່ຈະດຳລົງຕຳແໜ່ງປະທານສະພາບໍລິຫານ ແມ່ນຈະຖືກກຳນົດໂດຍກະຊວງການເງິນ ຖ້າກະຊວງການເງິນແຈ້ງຊື່ທ່ານໃດມາແມ່ນ ສະພາບໍລິຫານ ກໍຈະຮັບຮອງເອົາຕາມການຕົກລົງດັ່ງກ່າວ ແລະ ເປີດເຜີຍຂໍ້ມູນຕໍ່ສັງຄົມຮັບຊາບ.

ກອງປະຊຸມ ໄດ້ມີມະຕິຮັບຮອງ ເອົາ ທ່ານ ນ. ສາຍສະໝອນ ຈັນທະຈັກ ຜູ້ອຳນວຍການ ທຄຕລ ເປັນສະມາຊິກສະພາບໍລິຫານ ທຄຕລ ແລະ ເຫັນດີມອບສິດໃຫ້ສະພາບໍລິຫານ ທຄຕລ ຮັບຮອງເອົາເປົ້າໝາຍທີ່ຖືກແຕ່ງຕັ້ງຈາກກະຊວງການເງິນໃຫ້ ເປັນປະທານສະພາບໍລິຫານ ທຄຕລ.

ກອງປະຊຸມ ໄດ້ມີມະຕິຮັບຮອງ ດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 152.435.111 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ວາລະ 5: ພິຈາລະນາ ແລະ ຮັບຮອງການປັບປຸງນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ**

ທ່ານ ນ. ສາຍສະໝອນ ຈັນທະຈັກ, ຜູ້ອຳນວຍການ ທຄຕລ ລາຍງານຕໍ່ກອງປະຊຸມ: ນະໂຍບາຍນ້ຳມັນທຽວການສຳລັບພະນັກງານ ທຄຕລ ໄດ້ຮັບການກຳນົດມາຕັ້ງແຕ່ປີ 2010 ໂດຍທີ່ໄດ້ກຳນົດເປັນວົງເງິນແບບເດັດຖານຕາມແຕ່ລະຕຳແໜ່ງງານ. ມາເຖິງປະຈຸບັນລາຄານ້ຳມັນໄດ້ປັບຕົວຂຶ້ນສູງຫຼາຍ (ລາຄານ້ຳມັນແອັດຊັງ 10.500 ກີບຕໍ່ລິດໃນປີ 2010 ໄດ້ປັບເປັນ 19.570 ກີບຕໍ່ລິດ ຕົວເລກເດືອນກັນຍາ 2022) ເຮັດໃຫ້ນະໂຍບາຍທີ່ພະນັກງານໄດ້ຮັບບໍ່ສາມາດຮອງຮັບລາຄານ້ຳມັນໃນປະຈຸບັນໄດ້. ສະນັ້ນ, ເພື່ອເປັນການສ້າງຂວັນ ແລະ ກຳລັງໃຈໃຫ້ພະນັກງານ, ເພື່ອຕີຖອຍປະກົດການສະໝອງໄຫຼໃນພະນັກງານ ທຄຕລ ທີ່ໄດ້ມີການລາອອກຂ້ອນຂ້າງຫຼາຍໃນປີນີ້ ເຊິ່ງເປັນປະກົດການທີ່ບໍ່ເຄີຍປະກົດມີມາກ່ອນຢູ່ ທຄຕລ. ຄະນະອຳນວຍການ ທຄຕລ ໄດ້ຄົ້ນຄວ້າ ແລະ ເຫັນດີເປັນເອກະພາບ **ປັບປຸງນະໂຍບາຍນ້ຳມັນຈາກການກຳນົດຈຳນວນເງິນເດັດຖານ ມາເປັນ ກຳນົດເປັນຈຳນວນລິດສຳລັບແຕ່ລະຕຳແໜ່ງງານ ໂດຍຖືເອົາລາຄານ້ຳມັນແອັດຊັງທຳມະດາທີ່ລັດກຳນົດໃນແຕ່ລະໄລຍະ ຕາມຕາຕະລາງລຸ່ມນີ້:**

| ຕາຕະລາງປັບປຸງນະໂຍບາຍນ້ຳມັນ | | |
|---|---|---|
| | ເດີມ (ເງິນກີບ) | ປັບປຸງໃໝ່ (ລິດນ້ຳມັນ) |
| ຜູ້ອຳນວຍການ | 3,000,000 | **190** |
| ຮອງຜູ້ອຳນວຍການ | 2,200,000 | **140** |
| ສະມາຊິກສະພາບໍລິຫານທີ່ເປັນພ/ງ ທຄຕລ ແຕ່ບໍ່ໄດ້ເປັນຮອງຜູ້ອຳນວຍການ | 2,100,000 | **130** |
| ຫົວໜ້າພະແນກ, ຫົວໜ້າສູນ, ຫົວໜ້າສາຂາ | 1,800,000 | **110** |
| ຮອງຫົວໜ້າພະແນກ, ຮອງຫົວໜ້າສູນ, ຮອງຫົວໜ້າສາຂາ ແລະ ທຽບເທົ່າ | 1,600,000 | **100** |
| ຫົວໜ້າຂະແໜງ, ຫົວໜ້າໜ່ວຍບໍລິການຄົບວົງຈອນ ແລະ ທຽບເທົ່າ | 1,500,000 | **95** |
| ຮອງຫົວໜ້າຂະແໜງ ແລະ ຫົວໜ້າໜ່ວຍບໍລິການທົ່ວໄປ | 1,400,000 | **90** |
| ຮອງຫົວໜ້າໜ່ວຍບໍລິການທົ່ວໄປ | 1,300,000 | **80** |
| ຫົວໜ້າໜ່ວຍງານ | 1,200,000 | **75** |
| ພະນັກງານວິຊາການຊຳນານງານ | 1,000,000 | **70** |
| ພະນັກງານວິຊາການປະສົບການ | 1,000,000 | **70** |
| ພະນັກງານວິຊາການສົມບູນ | 1,000,000 | **65** |
| ພະນັກງານທົດສອບ | 0 | **25** |
| ພະນັກງານວິຊາການສັນຍາຈ້າງ | 0 | **25** |
| ພະນັກງານສັນຍາຈ້າງ | 0 | **25** |

ປະທານກອງປະຊຸມໄດ້ສະເໜີໃຫ້ຜູ້ຖືຮຸ້ນມີຄຳຖາມຕໍ່ວາລະນີ້ ເຊິ່ງມີຄຳເຫັນ ແລະ ຄຳຖາມດັ່ງນີ້:

❖ **ທ່ານ ໄກວັນ ກາດາວານິດ:**

- ອັດຕາການລາອອກຂອງພະນັກງານທີ່ມີຂ້ອນຂ້າງສູງນັ້ນ ທຄຕລ ໄດ້ຄຳນຶງເຖິງບັນຫານີ້ໄວ້ກ່ອນແດ່ບໍ? ການໃຊ້ຄຳສັບວ່າມີອັດຕາການລາອອກຂອງພະນັກງານສູງນັ້ນ ອາດຈະບໍ່ເໝາະສົມ ແລະ ອາດແຕະຕ້ອງເຖິງພາບພົດຂອງ ທຄຕລ ໄດ້.
- ການປະຕິບັດນະໂຍບາຍນ້ຳມັນ ທຄຕລ ເຮົາໃຊ້ລະບົບບັດເຕີມນ້ຳມັນໃຫ້ພະນັກງານບໍ ເຊິ່ງພະນັກງານຈຳເປັນຕ້ອງສະແດງໃບບິນນ້ຳມັນເພື່ອຂໍເບີກຈ່າຍເງິນນ້ຳມັນ?
- ຂໍຄວາມກະຈ່າງແຈ້ງວ່າການຂໍອະນຸມັດ ແມ່ນສະເພາະແຕ່ອະນຸມັດການປ່ຽນວິທີໃຫ້ນະໂຍບາຍນ້ຳມັນຈາກວົງເງິນມາເປັນລິດນ້ຳມັນ ແຕ່ບໍ່ແມ່ນການຮັບຮອງການປັບລາຍຈ່າຍນະໂຍບາຍນ້ຳມັນຂຶ້ນຕື່ມດັ່ງທີ່ລະບຸໃນເອກະສານຄັດຕິດ 5 ແມ່ນຫຼືບໍ່?

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**: ຕິດພັນກັບການປັບປຸງນະໂຍບາຍນໍ້າມັນ ເພື່ອແກ້ໄຂຊີວິດການເປັນຢູ່ໃຫ້ພະນັກງານ ທຄຕລ ໃນສະພາບທີ່ເສດຖະກິດມີຄວາມຫຍຸ້ງຍາກ, ໃນເອກະສານຊ້ອນທ້າຍ ເຮົາຕ້ອງການສະແດງຂໍ້ມູນໃຫ້ກອງປະຊຸມເຫັນເຖິງ ການກໍານົດນະໂຍບາຍນໍ້າມັນເປັນເງິນທີ່ປະຕິບັດຢູ່ໃນປະຈຸບັນ ແລະ ເປັນປະລິມານລິດນໍ້າມັນທີ່ພວມສະເໜີປັບປຸງ. ຖ້າທຽບນະໂຍບາຍເດີມເປັນຈໍານວນລິດນໍ້າມັນ ຕາມລາຄາໃນປີ 2010 ແມ່ນຈະເຫັນວ່າປະລິມານລິດນໍ້າມັນຕາມນະໂຍບາຍໃໝ່ທີ່ພວມສະເໜີປັບປຸງຢູ່ນີ້ຫຼຸດລົງຫຼາຍ. ແຕ່ຍ້ອນລາຄານໍ້າມັນປະຈຸບັນຖືດຕົວສູງຂຶ້ນ ຈໍານວນນະໂຍບາຍໃໝ່ເມື່ອຄິດໄລ່ເປັນເງິນກໍ່ເພີ່ມຂຶ້ນ, ເຊິ່ງການເບີກຈ່າຍແມ່ນເອົາຈໍານວນລິດທີ່ແຕ່ລະຕໍາແໜ່ງງານໄດ້ຮັບ ຄູນກັບ ລາຄານໍ້າມັນແອັດຊັງທໍາມະດາທີ່ຕາມລາຄາກະຊວງອຸດສາຫະກໍາ ແລະ ການຄ້າກໍານົດໃນແຕ່ລະໄລຍະ ແລ້ວໂອນເຂົ້າລາຍຮັບໃຫ້ພະນັກງານ ໃນແຕ່ລະເດືອນ. ໝາຍຄວາມວ່າເງິນນະໂຍບາຍນໍ້າມັນທີ່ພະນັກງານໄດ້ຮັບ ຈະປ່ຽນແປງໄປຕາມການເໜັງຕີງຂອງລາຄານໍ້າມັນໃນແຕ່ລະໄລຍະ. ສິ່ງທີ່ສະເໜີກອງປະຊຸມຮັບຮອງແມ່ນ ຈໍານວນລິດນໍ້າມັນສໍາລັບແຕ່ລະຕໍາແໜ່ງງານ.

❖ **ທ່ານ ອ່າງ ບຸດ**, ຈາກທະນາຄານແຄນນາເດຍ: ຖ້າການເບີກຈ່າຍປະຕິບັດເປັນລິດນໍ້າມັນ ອາດຈະເປັນການເພີ່ມພາລະໃຫ້ພະນັກງານ ແລະ ການບໍລິຫານຈັດການ ເນື່ອງຈາກຈະຕ້ອງເກັບກໍາໃບບິນການເຕີມນໍ້າມັນ ເພື່ອເປັນບ່ອນອີງໃນການຂໍເບີກນໍ້າມັນ, ສະນັ້ນການຄິດໄລ່ເປັນເງິນຈະເໝາະສົມຫຼາຍ ເຖິງວ່າລາຄາຍນໍ້າມັນຈະຂຶ້ນຫຼືລົງ ເຮົາກໍ່ພຽງແຕ່ເອົາຈໍານວນລິດມາຄູນກັບລາຄານໍ້າມັນ ເພື່ອເພີ່ມເຂົ້າໃສ່ລາຍຮັບເຂົາເຈົ້າໃນແຕ່ລະເດືອນ ເພາະວ່າຈະຕ້ອງຄິດໄລ່ເສຍອາກອນຕາມກົດໝາຍ.

➢ **ທ່ານ ນ. ສາຍສະໝອນ ຈັນທະຈັກ**: ການປັບປຸງແມ່ນສະເໜີໃຫ້ຮັບຮອງເອົາການປັບປຸງຕາມຈໍານວນປະລິມານລິດນໍ້າມັນ, ການເບີກຈ່າຍຕົວຈິງເປັນເງິນສົດ ອີງຕາມລາຄາຕົວຈິງຂອງນໍ້າມັນແຕ່ລະເດືອນ ແລ້ວຈ່າຍເປັນເງິນເຂົ້າກັບເງິນເດືອນຂອງພະນັກງານ, ການປັບປຸງໃນລັກສະນະນີ້ ເປັນວຽກງານດ້ານຈິດຕະສາດ ເພື່ອສ້າງກໍາລັງໃຈໃຫ້ພະນັກງານ.

- ສໍາຫຼັບອາກອນລາຍຮັບ ເປັນພັນທະທີ່ພະນັກງານ ທຄຕລ ຕ້ອງປະຕິບັດໃຫ້ລົດຄົບຖ້ວນ,
- ການລາອອກຂອງພະນັກງານກໍ່ມີຫຼາຍສາເຫດ, ແຕ່ໃນປະຫວັດການດໍາເນີນງານຂອງ ທຄຕລ 33 ປີ ຜ່ານມາຄົນທັງຫຼາຍຢາກເຂົ້າມາເປັນພະນັກງານ ທຄຕລ, ມີຜູ້ມາສະໝັກວຽກເປັນຈໍານວນຫຼາຍ. ແຕ່ໃນໄລຍະຫຼັງມານີ້ໂດຍສະເພາະປີ 2022 ມີພະນັກງານລາອອກ 10 ກວ່າຄົນ, ໃນນາມຄະນະບໍລິຫານຕ້ອງໄດ້ເບິ່ງເຫດຜົນເຊິ່ງເຫັນວ່າມີຫຼາຍບັນຫາ ໃນນັ້ນກໍ່ມີບັນຫາຄູ່ແຂ່ງຍາດແຍ່ງເອົາພະນັກງານຊ່ຽວຊານສະເພາະດ້ານ ເຊິ່ງກໍ່ເຫັນວ່າຕ້ອງມີການແກ້ໄຂໃນຊ່ວງວິກິດ ທີ່ຍັງມີຫຼາຍບັນຫາຫຍຸ້ງຍາກ ທຄຕລ ໄດ້ຄົ້ນຄວ້າສະເໜີການແກ້ໄຂເລີ່ມຈາກບັນຫານະໂຍບາຍນໍ້າມັນໃນເບື້ອງຕົ້ນກ່ອນ ເຖິງຈະໜ້ອຍກໍ່ເປັນການແກ້ໄຂຈາກນ້ອຍຫາໃຫຍ່ເລີ່ມເຮັດຈາກສິ່ງໃດທີ່ພວກເຮົາສາມາດເຮັດໄດ້ ເພື່ອໃຫ້ພະນັກງານໄດ້ເຫັນວ່າຜູ້ບໍລິຫານກໍ່ໃຫ້ຄວາມໃສ່ໃຈຕໍ່ບັນຫາຫຍຸ້ງຍາກຂອງເຂົາເຈົ້າ ແລະ ໃຫ້ເຂົາເຈົ້າເຫຼົ່ານັ້ນ ມີກໍາລັງໃຈໃນການປະຕິບັດວຽກງານຢ່າງໜຸ້ນທ່ຽງ.

ກອງປະຊຸມ ໄດ້ມີມະຕິຮັບຮອງການປັບປຸງນະໂຍບາຍນ້ຳມັນທຽວການໃຫ້ພະນັກງານ ທຄຕລ ຕາມການສະເໜີ ດ້ວຍຄະແນນສຽງສ່ວນຫຼາຍຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມດັ່ງນີ້:

- ເຫັນດີຈຳນວນ: 152.435.111 ສຽງ, ເທົ່າກັບ 100% ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.
- ບໍ່ເຫັນດີຈຳນວນ: 0 ສຽງ, ເທົ່າກັບ 0 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

**ບັນຫາອື່ນໆ:**

1. ***ທ່ານ ສອນນາລິນ ແສງມະນີ:*** ໄດ້ແຈ້ງໃຫ້ກອງປະຊຸມຮັບຊາບວ່າ ແຜນປະຈຳປີ 2022 ໄດ້ບັນຈຸແຜນຮັບພະນັກງານຈຳນວນ 6 ຄົນ ເຊິ່ງແຜນສະບັບດັ່ງກ່າວ ໄດ້ຖືກຮັບຮອງໃນກອງປະຊຸມຜູ້ຖືຮຸ້ນຄັ້ງຜ່ານມາແລ້ວ.

➢ ***ທ່ານ ນ. ສາຍສະໝອນ ຈັນທະຈັກ***: ເຫັນດີຕາມການລາຍງານ ແລະ ໃຫ້ກອງເລຂາບັນທຶກໄວ້ໃນບົດບັນທຶກກອງປະຊຸມ.

2. ***ທ່ານ ໄກວັນ ກາດາວານິດ***: ໄດ້ມີຄຳເຫັນ ດັ່ງນີ້:
   - ການລົງຂໍ້ມູນຂ່າວສານຕ່າງໆຜ່ານເວບໄຊຂອງ ທຄຕລ ໃຫ້ຜູ້ຖືຮຸ້ນຮັບຊາບຂໍ້ມູນໄດ້ດີຂຶ້ນ ເປັນສິ່ງຈຳເປັນ, ໂດຍຄວນເຮັດເປັນລິ້ງສະເພາະວຽກງານນັກລົງທຶນສຳພັນ ເນື່ອງຈາກເປັນຄຳສັບຫຼັກສຳລັບການຄົ້ນຫາຂໍ້ມູນ ເຊິ່ງບໍ່ຄວນຈະໃສ່ຊື່ລິ້ງວ່າການເປີດເຜີຍຂໍ້ມູນ ເພື່ອເປັນການ ໃຫ້ຂໍ້ມູນຢ່າງສະດວກແກ່ຜູ້ຖືຮຸ້ນ ແລະ ນັກລົງທຶນ;
   - BCEL One ມີການໂຄສະນາຈຸດແຂງຕ່າງໆກ່ຽວກັບບັດເຄດິດ ເຊັ່ນ: ປະກັນໄພເດີນທາງ ແຕ່ການໂຄສະນານີ້ ບໍ່ມີໃນເວັບໄຊຂອງ ທຄຕລ ເຊິ່ງເຫັນວ່າຈະສາມາດດຶງດູດລູກຄ້າໄດ້. ນອກຈາກນີ້ກໍ່ຄວນເພີ່ມເນື້ອໃນການໂຄສະນາ ຜົນປະໂຫຍດຂອງຜູ້ຖືບັດເຄດິດ ທຄຕລ ເຊັ່ນ: ການໃຊ້ບໍລິການຫ້ອງຮັບຮອງ Lounge ຢູ່ສະໜາມບິນຕ່າງໆທົ່ວໂລກ;
   - ການເກັບຄ່າທຳນຽມບັດສາກົນ ໃນການຊຳລະຄ່າສິນຄ້າ ແລະ ບໍລິການ ຄວນຈະຫັນປ່ຽນເປັນການນຳໃຊ້ຄິດໄລ່ສ່ວນຫຼຸດກັບຮ້ານ (Merchant discount rate) ເຊິ່ງຄ່າທຳນຽມການໃຊ້ບັດຈະຖືກໄລ່ລວມໃນລາຄາສິນຄ້າ ໂດຍຮ້ານຄ້າຕ້ອງແບ່ງຄືນມາໃຫ້ ທຄຕລ ເພື່ອບໍ່ໃຫ້ລູກຄ້າຮູ້ສຶກກັງວົນວ່າຖືກເກັບຄ່າທຳນຽມເວລາໃຊ້ບັດຊຳລະສິນຄ້າ;
   - ປະຈຸບັນ ທຄຕລ ໄດ້ຍົກເວັ້ນລາຍເຊັນລູກຄ້າ ກໍລະນີຊຳລະສິນຄ້າດ້ວຍບັດໃນຈຳນວນໃດໜຶ່ງທີ່ແນ່ນອນ. ແຕ່ໃນຕົວຈິງເຫັນວ່າຮ້ານຄ້າບໍ່ໄດ້ຮັບການຝຶກອົບຮົມເທົ່າທີ່ຄວນ ແລະ ກາຍເປັນຄວາມສັບສົນສຳລັບຮ້ານຄ້າ ແລະ ຜູ້ຖືບັດເອງວ່າຈະຕ້ອງໄດ້ເຊັນໃນໃບສະລິບຈ່າຍເງິນຫຼືບໍ່. ໃນທີ່ນີ້ອາດຈະແກ້ດ້ວຍ 2 ວິທີຄື ຝຶກບັນດາຮ້ານຄ້າໃຫ້ເຂົ້າໃຈລະອຽດ ຫຼືບໍ່ກໍ່ໃຫ້ຜູ້ຖືບັດເຊັນທຸກທຸລະກຳຄືຜ່ານມາ.

- **ທ່ານ ນ. ສາຍສະໝອນ ຈັນທະຈັກ**: ຂອບໃຈສຳຫຼັບຄຳເຫັນ ຕໍ່ກັບບັນຫາຕ່າງໆ ທຄຕລ ຈະຮັບເອົາທຸກຄຳເຫັນເພື່ອຄົ້ນຄວ້າປັບປຸງການບໍລິການຂອງ ທຄຕລ ໃຫ້ດີຂຶ້ນ ຕາມຄວາມເໝາະສົມ.

ປະທານກອງປະຊຸມ ໄດ້ກ່າວສະແດງຄວາມຂອບໃຈຜູ້ຖືຮຸ້ນ ແລະ ຕາງໜ້າຜູ້ຖືຮຸ້ນ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມ ພ້ອມທັງໄດ້ປະກາດປິດກອງປະຊຸມໃນເວລາ 15:30 ໂມງ ຂອງວັນດຽວກັນ.

| | |
|---|---|
| **ປະທານກອງປະຊຸມ** | **ຜູ້ບັນທຶກ** |
| **ຄຳສຸກ ສູນດາລາ** | ພອນດາສຸກ ວົງພະຈັນ |